**ມະຫາວິທະຍາໄລຂອງ ລອສ ແອນເຈີເລສ ຄາລີຟໍເນຍ**

# ໃບລາຍການບົ່ງບອກສິດ

## ຂອງຜູ້ເຂົ້າຮ່ວມການຄົ້ນຄ້ວາ

ສິດເຫລົ່ານີ້ ແມ່ນສິດຂອງທຸກໆຄົນ ຜູ້ທີ່ຖືກຂໍໃຫ້ເຂົ້າຮ່ວມໃນການສຶກສາຄົ້ນຄ້ວາທາງດ້ານການແພດ. ໃນຂະນະທີ່ເປັນຜູ້ເຂົ້າຮ່ວມການຄົ້ນຄ້ວາ, ຂ້າພະເຈົ້າມີສິດດັ່ງຕໍ່ໄປນີ້:

1. ຂ້າພະເຈົ້າມີສິດທີ່ຈະຮັບຮູ້ ສິ່ງທີ່ການຄົ້ນຄ້ວາກໍາລັງພະຍາຍາມຄົ້ນຫາ.

2. ຂ້າພະເຈົ້າມີສິດທີ່ຈະຮັບຮູ້ກ່ຽວກັບຂັ້ນຕອນຂອງການຄົ້ນຄ້ວາທັງໝົດ, ຢາ, ແລະ/ຫລື ຄໍາແນະນໍາ ແລະ ສິ່ງຕ່າງໆເຫລົ່ານີ້ ທີ່ແຕກຕ່າງຈາກສິ່ງທີ່ຈະນໍາໃຊ້ໃນການປະຕິບັດແບບມາດຕະຖານ ຫລື ບໍ່.

3. ຂ້າພະເຈົ້າມີສິດທີ່ຈະຮັບຮູ້ກ່ຽວກັບຄວາມສ່ຽງຕ່າງໆ, ຄວາມບໍ່ສະດວກ ຫລື ຜົນກະທົບຂ້າງຄຽງ ທີ່ອາດຈະເກີດຂື້ນຢ່າງມີເຫດຜົນ ເຊິ່ງເປັນຜົນທີ່ໄດ້ຮັບຈາກການຄົ້ນຄ້ວາ.

4. ຂ້າພະເຈົ້າມີສິດທີ່ຈະຮັບຮູ້ກ່ຽວກັບສິດຜົນປະໂຫຍດ, ຖ້າມີ, ຂ້າພະເຈົ້າສາມາດຄາດຫວັງຈາກການເຂົ້າຮ່ວມຢ່າງມີເຫດຜົນ.

5. ຂ້າພະເຈົ້າມີສິດທີ່ຈະຮັບຮູ້ກ່ຽວກັບທາງເລືອກອື່ນໆທີ່ຂ້າພະເຈົ້າມີ ແລະ ພວກມັນອາດຈະດີກ່ວາ ຫລື ຮ້າຍແຮງກ່ວາຢູ່ໃນການຄົ້ນຄ້ວາ. ທາງເລືອກເຫລົ່ານີ້ ອາດຈະປະກອບດ້ວຍຂັ້ນຕອນການດໍາເນີນງານ, ຢາ ຫລື ຄໍາແນະນໍາອື່ນໆ.

6. ຂ້າພະເຈົ້າມີສິດທີ່ຈະຮັບຮູ້ ປະເພດຂອງການປິ່ນປົວທີ່ຈະໄດ້ຮັບ ຖ້າວ່າການຄົ້ນຄ້ວາເຮັດໃຫ້ເກີດພະຍາດແຊກແຊງຕ່າງໆ.

7. ຂ້າພະເຈົ້າມີສິດທີ່ຈະສອບຖາມຄໍາຖາມຕ່າງໆ ທີ່ກ່ຽວຂ້ອງກັບການຄົ້ນຄ້ວາ ຫລື ຂັ້ນຕອນຂອງການຄົ້ນຄ້ວາ. ຂ້າພະເຈົ້າສາມາດສອບຖາມຄໍາຖາມເຫລົ່ານີ້ກ່ອນການຄົ້ນຄ້ວາຈະເລີ່ມຕົ້ນຂຶ້ນ ຫລື ຕະຫລອດເວລາໃນຊ່ວງເວລາຂອງການຄົ້ນຄ້ວາ.

8. ຂ້າພະເຈົ້າມີສິດທີ່ຈະປະຕິເສດການເຂົ້າຮ່ວມເປັນພາກສ່ວນໜຶ່ງຂອງການຄົ້ນຄ້ວາ ຫລື ຢຸດ ໄດ້ຕະຫລອດເວລາ. ການຕັດສິນໃຈນີ້ຈະບໍ່ມີຜົນກະທົບຕໍ່ການປິ່ນປົວຂອງຂ້າພະເຈົ້າ ຫລື ສາຍພົວພັນກັບໝໍ ຫລື ສະຖາບັນນີ້ ໃນວິທີທາງອື່ນ.

9. ຂ້າພະເຈົ້າມີສິດໄດ້ຮັບສໍາເນົາ ທີ່ໄດ້ລົງນາມ ແລະ ລົງວັນທີ ໃສ່ແບບຟອມຍິນຍອມເພື່ອການຄົ້ນຄ້ວາ.

10. ຂ້າພະເຈົ້າມີສິດທີ່ຈະໄດ້ຮັບອິດສະລະພາບຈາກຄວາມກົດດັນຕ່າງໆ ໃນຂະນະທີ່ຂ້າພະເຈົ້າຕັດສິນໃຈວ່າ ຂ້າພະເຈົ້າຕ້ອງການເຂົ້າຮ່ວມໃນການສຶກສາຄົ້ນຄ້ວາ ຫລື ບໍ່.

---

ຖ້າວ່າຂ້າພະເຈົ້າມີຄໍາຖາມ ຫລື ຄວາມກັງວົນ ຂ້າພະເຈົ້າສາມາດສອບຖາມກັບນັກຄົ້ນຄ້ວາ ຫລື ຜູ້ຊ່ວຍໃນການຄົ້ນຄ້ວາ. ຂ້າພະເຈົ້າສາມາດຕິດຕໍ່ພົວພັນກັບ ຫ້ອງການສໍາລັບປ້ອງກັນຫົວຂໍ້ຂອງການຄົ້ນຄ້ວາ (OPRS) ເຊັ່ນດຽວກັນ, ເຊິ່ງຊ່ວຍປ້ອງກັນຜູ້ເຂົ້າຮ່ວມຂອງການສຶກສາຄົ້ນຄ້ວາ. ຂ້າພະເຈົ້າສາມາດຕິດຕໍ່ຫາຫ້ອງການສໍາລັບປ້ອງກັນຫົວຂໍ້ຂອງການຄົ້ນຄ້ວາ (OHRPP) ໂດຍໂທຣະສັບໄປທີ່ໝາຍເລກ 310-825-5344 ຈາກ 8:00 ໂມງເຊົ້າ ເຖິງ 5:00 ໂມງແລງ, ວັນຈັນ ຮອດ ວັນສຸກ. ຖ້າວ່າຂ້າພະເຈົ້າໂທຫາຫ້ອງການນີ້ ແລະ ບໍ່ສາມາດເວົ້າພາສາອັງກິດ ຫລື ພາສາສະເປນໄດ້, ຂ້າພະເຈົ້າຄວນຈະມີຜູ້ໃດຜູ້ໜຶ່ງທີ່ສາມາດແປຄວາມໝາຍໃຫ້ຂ້າພະເຈົ້າ. ເຊັ່ນດຽວກັນນັ້ນ ຂ້າພະເຈົ້າອາດຈະຂຽນຈົດໝາຍໄປທີ່ ຫ້ອງການສໍາລັບປ້ອງກັນຫົວຂໍ້ຂອງການຄົ້ນຄ້ວາ (OHRPP), 11000 Kinross Avenue, Suite 102, Box 951694, Los Angeles, CA 90095-1694.